ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ

LAO CEMENT PUBLIC COMPANY

ບ້ານໂພນພະເນົາ ວຽງຈັນ, ສ.ປ.ປ.ລາວ ຕູ້ປນ 6821, ໂທຣ: (865-21) 451222, 451116 ແຟັກ: 451117

PHONPHANAO VILLAGE,VIENTIANE, LAO P.D.R. P.O.BOX 6821, TEL : (856 - 21) 451222, 451116 FAX: 451117

E-mail:Lcc@laocement.com,www.laocement.com

ເລກທີ 116 /ບຊລ

ນະຄອນຫລວງວຽງຈັນ, ວັນທີ 28 APR 2023

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
: ທ່ານ ຜູ້ອຳນວຍການໃຫ່ຍຕະຫລາດຫຼັກຊັບລາວ
: ທ່ານ ຜູ້ຖືຮຸ້ນຂອງບໍລິສັດ ຊີມັງລາວ ມະຫາຊົນ

ເລື່ອງ : ແຈ້ງມະຕິຂອງກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ຄັ້ງວັນທີ 28/04/2023.

- ອີງຕາມຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ (ສະບັບປັບປຸງ) ຂອງ ສຄຄຊ ສະບັບ ເລກທີ 04/ສສຄ ລົງວັນທີ 28 ມັງກອນ ປີ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງ ວັນທີ 27 ກັນຍາ 2018.

ບໍລິສັດ ຊີມັງລາວ ມະຫາຊົນ (ບໍລິສັດ) ຂໍຖືເປັນກຽດແຈ້ງມະຕິ ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 (ຕໍ່ໄປນີ້ຮຽກວ່າ : ກອງປະຊຸມ) ໄດ້ໄຂຂຶ້ນໃນເວລາ 09:00 ຫາ 11:45 ໂມງ ຂອງ ວັນທີ 28/04/2023 ທີ່ຫ້ອງປະຊຸມຊັ້ນ 4 ສຳນັກງານລັດວິສາຫະກິດ ພກອ, ນະຄອນຫຼວງວຽງຈັນ ໂດຍ ການເປັນປະທານຂອງ ທ່ານ ວັນທອງ ສິດທິກຸນ ຮອງປະທານສະພາບໍລິຫານ ບຊລ, ພ້ອມດ້ວຍສະມາຊິກ ສະພາບໍລິຫານ ບຊລ, ຊຶ່ງມີຜູ້ເຂົ້າຮ່ວມກອງປະຊຸມທັງໝົດ 34 ທ່ານ, ໃນນີ້ ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນ ເອງຈຳນວນທັງໝົດ 8 ທ່ານ, ຜູ້ມອບສິດຈຳນວນ 13 ທ່ານ, ຊຶ່ງກວມຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງ ປະຊຸມເທົ່າກັບ 35,591,400 ຮຸ້ນ, ນັບທັງຮຸ້ນທີ່ຖືກມອບສິດ, ບັນລຸອັດຕາສ່ວນ 89% ຂອງຈຳນວນ ຮຸ້ນ ບຊລ ທັງໝົດ ແລະຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດຳເນີນກອງປະຊຸມໄດ້ຕາມລະບຽບການຂອງ ບຊລ ແລະ ກົດໝາຍທີ່ກ່ຽວຂ້ອງ, ສຳລັບຮຸ້ນທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມມີຈຳນວນ 4,412,600 ຮຸ້ນເທົ່າກັບ 11% ຂອງຈຳນວນຮຸ້ນ ບຊລ.

<u>ກອງປະຊຸມໄດ້ພິຈາລະນາ ແລະມີມະຕິດັ່ງນີ້</u> :

- **ວາລະທີ 1**: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນຂອງ ບໍລິສັດ ຊີມັງລາວ ມະຫາຊົນ ປະຈຳປີ 2021.

- **ມະຕິ** : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

  - ເຫັນດີຈຳນວນ 35,591,400 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

- **ວາລະທີ 2** :ພິຈາລະນາ ແລະ ຮັບຮອງບົດລາຍງານວຽກງານການດຳເນີນທຸລະກິດ ຂອງບໍລິສັດຊິມັງ ລາວ ມະຫາຊົນ ປະຈຳປີ 2022
- **ມະຕິ** : ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

  - ເຫັນດີຈຳນວນ 35,591,400 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %
- **ວາລະທີ 3** : ພິຈາລະນາ ແລະ ຮັບຮອງເອກະສານລາຍງານການເງິນ ຂອງບໍລິສັດຊິມັງ ລາວ ມະຫາຊົນປະຈຳປີ 2022.
- **ມະຕິ** : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

  - ເຫັນດີຈຳນວນ 35,591,400 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %
- **ວາລະທີ 4** : ພິຈາລະນາ ແລະ ຮັບຮອງ ການແຕ່ງຕັ້ງສະພາບໍລິຫານຊຸດໃໝ່ ຂອງ ບໍລິສັດ ຊິມັງລາວ ມະຫາຊົນ.
- **ມະຕິ** : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

  - ເຫັນດີຈຳນວນ 35,591,400 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %
- **ວາລະທີ 5** : ພິຈາລະນາ ແລະ ຮັບຮອງ ການແຕ່ງຕັ້ງຜູ້ຜູ້ບໍລິຫານຂັ້ນສູງຂອງບໍລິສັດ ຊິມັງລາວ ມະຫາຊົນ
- **ມະຕິ** : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

  - ເຫັນດີຈຳນວນ 35,591,400 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

- **ວາລະທີ 6** : ພິຈາລະນາ ແລະ ຮັບຮອງ ການຍົກຍ້າຍໂຮງງານຊິມັງວັງວຽງ ຫຼັງ 2 ໄປຕັ້ງຢູ່ເຂດອຸດສາຫະກຳຊັບພະຍາກອນປັບປຸງໃໝ່ ແຂວງຄຳມ່ວນ.

- ມະຕິ : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທ້າງໜົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

  - ເຫັນດີຈຳນວນ 35,591,400 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

- **ວາລະທີ 7 : ພິຈາລະນາ ແລະ ຮັບຮອງ** ການສ້າງຕັ້ງບໍລິສັດ ສະໝຸນໄພ ຈຳກັດ.

- ມະຕິ : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທ້າງໜົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

  - ເຫັນດີຈຳນວນ 35,591,400 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານ ເພື່ອຊາບ ໃຊ້ຕາງລາຍງານ
ດ້ວຍຄວາມເຄົາລົບ ແລະນັບຖືເປັນຢ່າງສູງ,

ປະທານກອງປະຊຸມ

ວັນທອງ ສິດທິນຸ